ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ

ເລກທີ 2631 /ຫອຄ.ບຫ

ນະຄອນຫຼວງວຽງຈັນ, ວັນທີ 21 ພະຈິກ 2019

# ແຈ້ງການ

**ເຖິງ:** ບັນດາບໍລິສັດ ແລະ ຫົວໜ່ວຍວິສາຫະກິດ ພາຍໃນນະຄອນຫຼວງວຽງຈັນ.

**ເລື່ອງ:** ເຊີນເຂົ້າຮ່ວມປະມູນສົມທຽບລາຄາກ່ຽວກັບການສະໜອງ ເຄື່ອງໃຊ້ຫ້ອງການ, ເຄື່ອງໄອທີ, ນ້ຳມຶກປິ້ນເຕີ, ເຄື່ອງກັອບປີ ແລະ ການສ້ອມແປງ ປ່ຽນຖ່າຍອາໄລ່ ລະບົບເຄື່ອງໄອທີ, ພາຫະນະ, ລະບົບແອເຢັນ, ລະບົບໄຟຟ້າ, ນ້ຳປະປາ ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ປະຈຳສົກປີ 2020.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 1273/ອຄ, ລົງວັນທີ 25 ກໍລະກົດ 2016.
- ອີງຕາມ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017.
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງການເງິນ ວ່າດ້ວຍກຳນົດໝາຍການໃຊ້ຈ່າຍງົບປະມານບໍລິຫານຂອງລັດ (ສະບັບປັບປຸງໃໝ່) ສະບັບເລກທີ 4000/ກງ, ລົງວັນທີ 12 ທັນວາ 2018.

ຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດແຈ້ງມາຍັງບັນດາບໍລິສັດ ແລະ ຫົວໜ່ວຍວິສາຫະກິດຕ່າງໆ ພາຍໃນນະຄອນຫຼວງວຽງຈັນ, ທີ່ມີຈຸດປະສົງ ຢາກເຂົ້າຮ່ວມປະມູນສົມທຽບລາຄາ(ຕາມລາຍການຕາຕະລາງຄັດຕິດມາພ້ອມ) ເພື່ອຕອບສະໜອງໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ໃນສົກງົບປະມານປີ 2020 ລາຍລະອຽດມີດັ່ງນີ້:

1. ການຕອບສະໜອງອຸປະກອນເຄື່ອງຮັບໃຊ້ຫ້ອງການ, ເຄື່ອງອານາໄມສຳນັກງານ, ເຄື່ອງຮັບແຂກການນຳ ແລະ ເຄື່ອງບຳລຸງຮັກສາພາຫະນະ.
2. ການຕອບສະໜອງເຄື່ອງຄອມພິວເຕີ, ຈັກໂຟໂຕກັອບປີ, ນ້ຳມຶກປິ້ນເຕີ, ນ້ຳມຶກຈັກໂຟໂຕກັອບປີ ແລະ ການຕິດຕັ້ງ ສ້ອມແປງ, ປ່ຽນຖ່າຍອາໄຫຼ່ລະບົບເຄື່ອງ IT.
3. ການຕອບສະໜອງອຸປະກອນບຳລຸງຮັກສຳນັກງານ ເຊັ່ນ: ການສ້ອມແປງປ່ຽນຖ່າຍອາໄຫຼ່ ລະບົບແອເຢັນ, ລະບົບໄຟຟ້າ ແລະ ນ້ຳປະປາ.
4. ການບໍລິການສ້ອມແປງ ປ່ຽນຖ່າຍອາໄຫຼ່ ແລະ ການບຳລຸງຮັກສາ ພາຫະນະ.

ໃນ 04 ລາຍການທີ່ກ່າວມາຂ້າງເທິງນີ້ ບໍລິສັດໃດ ຫຼື ວິສາຫະກິດໃດ ທີ່ຈະເຂົ້າຮ່ວມການປະມູນ ແມ່ນມີສິດເລືອກໄດ້ພຽງ 01 ລາຍ ການເທົ່ານັ້ນ ແລະ ຕ້ອງປະຕິບັດຕາມລະບຽບເງື່ອນໄຂ ດັ່ງນີ້:

I. **ກຳນົດຂອບເຂດເວລາ:**

- ສາມາດພົວພັນຊື້ຊອງປະມູນໄດ້ທີ່ ພະແນກບໍລິຫານ ຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ, ນັບແຕ່ວັນທີ 04-16/12/2019 ແລະ ສົ່ງຊອງປະມູນໃຫ້ຄະນະກຳມະການປະມູນ ບໍ່ໃຫ້ກາຍ ເວລາ 11:30 ໂມງ ຂອງວັນທີ 17/12/2019 ທີ່ຫ້ອງປະຊຸມຂອງຫ້ອງການ ຊັ້ນ 04 ແລະ ຈະມີການເປີດຊອງປະມູນ ໃນເວລາ 01:30 ໂມງ ຂອງວັນດຽວກັນ.
- ລາຄາຊອງປະມູນຊອງລະ 300,000 ກີບ ຕໍ່ ຊອງ, (ເງິນຊື້ຊອງປະມູນນີ້ແມ່ນບໍ່ໄດ້ສົ່ງຄືນ).
- ພາຍຫຼັງສຳເລັດການເປີດຊອງປະມູນພາຍໃນ 5 ວັນ ຈະແຈ້ງຜົນການປະມູນ ໃຫ້ບັນດາບໍລິສັດ ແລະ ຫົວໜ່ວຍວິສະຫະກິດຮັບຊາບ ແລະ ແຈ້ງເຊີນໃຫ້ຫົວໜ່ວຍວິສະຫະກິດໃດທີ່ຊະນະການປະມູນ ເຂົ້າມາຮ່ວມຕົກລົງເຈລະຈາ ເຊັນສັນຍາກັບຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ ຕາມລະບຽບການ.

II. **ເອກະສານທີ່ຕ້ອງປະກອບຂັດຕິດມາພ້ອມຊອງປະມູນ:**

- ຕ້ອງມີໃບທະບຽນວິສາຫະກິດທີ່ຖືກຕ້ອງ.
- ຕ້ອງມີໃບທະບຽນອາກອນ ຫຼື ໃບຢັ້ງຢືນການເສຍອາກອນ ສົກປີ 2019.
- ຕ້ອງມີໃບບິນອາກອນສະເພາະຂອງວິສາຫະກິດນັ້ນ.
- ຕ້ອງມີໃບອະນຸຍາດດຳເນີນທຸລະກິດຂອງຂະແໜງການທີ່ກ່ຽວຂ້ອງ (ຖ້າມີ).
- ຕ້ອງມີແຜນວາດທີ່ຕັ້ງຂອງວິສາຫະກິດ, ທີ່ຢູ່, ເບີໂທ ຫຼື Email.
- ຕ້ອງລະບຸລາຄາບັນດາເຄື່ອງຂອງ, ອຸປະກອນ ແລະ ສິນຄ້າຜະລິດຈາກປະເທດໃດ (ຕາມລາຍການທີ່ກຳນົດຢູ່ໃນຕາຕະລາງ, ພ້ອມທັງສະຫຼຸບສັງລວມຕົວເລກທັງໝົດຂອງແຕ່ລະລາຍການ ແລະ ຕົວເລກລວມຂອງແຕ່ລະຂໍ້ໃຫ້ຖືກຕ້ອງ ແລະ ຊັດເຈນ), ທຸກໆລາຍການ ຕ້ອງໃສ່ລາຄາໃຫ້ຄົບຕາມຕາຕະລາງ, ຖ້າບໍ່ປະຕິບັດຕາມເງື່ອນໄຂທີ່ກ່າວມາຂ້າງເທິງ ຖືວ່າວິສາຫະກິດນັ້ນແມ່ນຖືກສະຫຼະສິດ ຈະບໍ່ຮັບພິຈາລະນາ.

III. **ເງື່ອນໄຂມາດຖານ ແລະ ຄວາມພ້ອມຂອງວິສາຫະກິດ:**

- ວິສະຫະກິດຕ້ອງຕອບສະໜອງວັດຖຸອຸປະກອນໃຫ້ຄູ່ສັນຍາ ຕາມກຳນົດເວລາທີ່ຕົກລົງກັນໄວ້ໃນສັນຍາ.
- ຕ້ອງເປັນວິສາຫະກິດທີ່ມີການເຄື່ອນໄຫວດຳເນີນທຸລະກິດທີ່ມີປະສົບການ ຢ່າງໜ້ອຍ 02 ປີ ຂຶ້ນໄປ.
- ວິສາຫະກິດຕ້ອງມີວິຊາການຂອງຕົນ ທີ່ມີປະສົບການໃນການຕິດຕັ້ງ, ສ້ອມແປງ ຢ່າງໜ້ອຍ 02 ຄົນຂຶ້ນໄປ.

IV. **ເງື່ອນໄຂການຊຳລະສະສາງ:**

ການຊຳລະສະສາງແມ່ນນຳໃຊ້ຮ່ວງເງິນງົບປະມານຂອງກະຊວງອຸດສາຫະກຳ ແລະ ການຄ້າ ດ້ວຍລະບົບເງິນໂອນ ຂອງສົກປີ 2020 (ປະຕິບັດຕາມລະບຽບຂອງກະຊວງການເງິນ) ຊຶ່ງການຊຳລະແມ່ນຈະໄດ້ຊຳລະໜີ້ສິນໃຫ້ຫົວໜ່ວຍວິສາຫະກິດທີ່ຊະນະການປະມູນ ຂອງສົກປີ 2019 ສຳເລັດແລ້ວກ່ອນທັງໝົດ ຈຶ່ງຈະຊຳລະໜີ້ສິນຕາມມູນຄ່າລວມທັງໝົດຂອງແຕ່ລະລາຍການ ໃຫ້ວິສາຫະກິດ ທີ່ຊະນະການປະມູນໃນສົກປີ 2020 ໂດຍປະຕິບັດຕາມສັນຍາທີ່ຕົກລົງຮ່ວມກັນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາບໍລິສັດ ແລະ ຫົວໜ່ວຍວິສາຫະກິດທີ່ມີຄວາມພ້ອມຕາມເງື່ອນໄຂ ແລະ ຈຸດປະສົງທີ່ກ່າວມາຂ້າງເທິງນີ້ດ້ວຍ.

ຫົວໜ້າຫ້ອງການ

ກະຊວງອຸດສາຫະກຳ ແລະ ການຄ້າ
ຫ້ອງການ

ມ.ບານສະຕິ ເທບພະວົງ

ເບີໂທຕິດຕໍ່: 021 412000, 020 52152133